ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1440-----/ອຄ.ກຂອ

ນະຄອນຫລວງ, ວັນທີ 04 SEP 2008

## ແຈ້ງການ

ເຖິງ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ,ນະຄອນຫລວງ.

ເລື່ອງ : ການຄຸ້ມຄອງພາຫະນະລາກແກ່ໄມ້,ເຄື່ອງຈັກຂຸດຄົ້ນໄມ້,ເຄື່ອງຈັກປຸງແຕ່ງໄມ້.

- ເພື່ອເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງວຽກງານທຸລະກິດໄມ້ໃຫ້ໄປຕາມນະໂຍບາຍຂອງລັດ.
- ເພື່ອເຮັດໃຫ້ວຽກງານການຄຸ້ມຄອງພາຫະນະລາກແກ່ໄມ້, ເຄື່ອງຈັກຂຸດຄົ້ນໄມ້ ແລະ ເຄື່ອງຈັກປຸງແຕ່ງໄມ້ ໃຫ້ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດດັ່ງນີ້:

1. ການອະນຸຍາດນຳເຂົ້າ,ນຳໃຊ້ພາຫະນະຂຸດຄົ້ນ ແລະ ຂົນສົ່ງໄມ້ , ເຄື່ອງຈັກຂຸດຄົ້ນໄມ້ ຕ້ອງໄດ້ຜ່ານການເຫັນດີ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ ເສຍກ່ອນ ກະຊວງ ອຸດສາຫະກຳ ແລະ ການຄ້າ(ກົມການນຳເຂົ້າ ແລະສົ່ງອອກ) ຈຶ່ງອອກອະນຸຍາດໃຫ້.
2. ການຈຳໜ່າຍເຄື່ອງຈັກປຸງແຕ່ງໄມ້ທຸກຊະນິດ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ອຸປະກອນ ແລະ ເຄື່ອງຈັກດັ່ງກ່າວ ມອບໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງບົນພື້ນຖານຫລັກການທີ່ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບເລກ ທີ 0221/ອຄ. ລົງວັນທີ 13/02/07 ວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້,ຫວາຍ ແລະ ໄມ້ປ່ອງ.
3. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ສົມທົບກັບ ຂະແໜງການກ່ຽວຂ້ອງ ໃນການດຳເນີນການກວດກາ ການຂຶ້ນທະບຽນ ພາຫະນະ ສະເພາະລາກແກ່ໄມ້,ເຄື່ອງຈັກຂຸດຄົ້ນໄມ້, ອຸປະກອນ ຫລື ເຄື່ອງຈັກຕັດໄມ້ທຸກຊະນິດ ທີ່ໄດ້ນຳເຂົ້າ ແລະ ມີແລ້ວກ່ອນແຈ້ງການສະບັບນີ້ ແຕ່ບໍ່ມີບັນຊີຄຸ້ມຄອງລະອຽດເທື່ອຕາມລະບຽບການກ່ຽວຂ້ອງ.
4. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນມາດຕະການຢ່າງເດັດຂາດຕໍ່ຜູ້ທີ່ລ່ວງລະເມີດ.
5. ສຳລັບເຄື່ອງຈັກຂຸດຄົ້ນໄມ້, ພາຫະນະລາກແກ່-ຂົນສົ່ງໄມ້ ຮັບໃຊ້ໂຄງການ ທີ່ ລັດຖະບານອະນຸມັດ ຕ້ອງໄດ້ປະຕິບັດຕາມລະບຽບການສະເພາະ.
6. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາແຈ້ງການ ຫລື ລະບຽບການທີ່ມີເນື້ອໃນຂັດກັບແຈ້ງການສະບັບນີ້ແມ່ນຖືກລົບລ້າງ.

ລັດຖະມົນຕີວ່າການ

ກະຊວງ ອຸດສາຫະກຳ ແລະ ການຄ້າ.

ດຣ. ນາມ ວິຍະເກດ